# <u>ປະກາດການປະມູນ</u>

ເອກະສານປະມູນເລກທີ: **CFL 003/2023**

ວັນທີ: **31/08/2023**

**ອົງການຊາຍຟັນ ປະຈຳ ສປປ ລາວ ມີຄວາມຍິນດີ ຂໍເຊີນບັນດາບໍລິສັດກໍ່ສ້າງທີ່ມີເງື່ອນໄຂ ເພື່ອເຂົ້າຮ່ວມການປະມູນແຂ່ງຂັນລາຄາໃນການກໍ່ສ້າງຫ້ອງນໍ້າຢູ່ໂຮງຮຽນ ທີ່ ບ້ານ ປ່າຫວານ ແລະ ບ້ານ ໂຄ້ງ, ເມືອງ ຊຳເໜືອ, ແຂວງ ຫົວພັນ ແລະ ບ້ານ ປ່າຮ່າງ ແລະ ຫ້ວຍຕຸງ, ເມືອງ ສົບເບົາ, ແຂວງ ຫົວພັນ.**

ເງື່ອນໄຂຂອງການປະມູນ:

1. ຜູ້ປະມູນຕ້ອງມີໜັງສືຄໍ້າປະກັນການປະມູນຈາກທະນາຄານເຊິ່ງເທົ່າກັບ **30,000,000** ກີບ(ສາມສິບລ້ານກີບ), ໜັງສືຄໍ້າປະກັນຈາກທະນາຄານ ຕ້ອງມີ ອາຍຸຮັບປະກັນ **30** ວັນ. ໜັງສືຄໍ້າປະກັນຈາກທະນາຄານຈະສົ່ງຄືນໃຫ້ຜູ້ເຂົ້າຮ່ວມປະມູນ ທີ່ບໍ່ໄດ້ຮັບຊະນະການປະມູນ ພາຍໃນເວລາ **30** ວັນ. ສຳລັບຜູ້ທີ່ໄດ້ຮັບຊະນະການປະມູນ ຕ້ອງມີໜັງສືຄໍ້າປະກັນການປະຕິບັດສັນຍາເທົ່າກັບ **10%** ຂອງມູນຄ່າການປະມູນ ແລະ ຕ້ອງມີອາຍຸຮັບປະກັນ **60** ວັນ;
2. ຜູ້ປະມູນ ຕ້ອງສຳເລັດການສະໜອງວັດສະດຸ ແລະ ວຽກກໍ່ສ້າງການກໍ່ສ້າງທັງໝົດ ຕາມສະຖານທີ່ກຳນົດຂ້າງເທິງນີ້ ພາຍໃນກຳນົດເວລາ **75** ວັນ ພາຍຫຼັງເຊັນສັນຍາ;
3. ລາຄາທີ່ສະເໜີມາຕໍ່າສຸດ ຈະບໍ່ເປັນມາດຖານທີ່ຈະໄດ້ຮັບການພິຈາລະນາພຽງຢ່າງດຽວ, ຄຸນນະພາບ ແລະ ປະສົບການທີ່ຜ່ານມາກໍຈະໄດ້ຮັບການພິຈາລະນາເຊັ່ນກັນ;
4. ຜູ້ທີ່ສົນໃຈຢາກເຂົ້າຮ່ວມການປະມູນ ສາມາດໄປຮັບເອກະສານປະມູນໄດ້ຈາກຫ້ອງການ ອົງການຊາຍຟັນປະຈຳ ສປປ ລາວ ທີ່: ບ້ານ ພັນໄຊ, ເມືອງຊຳເໜືອ ແຂວງຫົວພັນ ເວລາ **8:30-12:00** ເຊົ້າ ເຖິງ **13:30-16:00** ແລງ, ວັນຈັນ ເຖິງ ວັນສຸກ. ເບີໂທ **064 314535.** ນັບຕັ້ງແຕ່ມື້ລົງປະກາດເປັນຕົ້ນໄປ ຈົນຮອດວັນທີ 13/09/2023;
5. ການເປີດຊອງປະມູນຢ່າງເປັນທາງການຈະມີຂຶ້ນໃນວັນທີ **13/09/2023;** ເວລາ **15:00** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຜູ້ຕາງໜ້າຜູ້ເຂົ້າປະມູນ (ຜູ້ທີ່ມີຄວາມສົນໃຈເຂົ້າ ຮ່ວມເປັນພິຍານ), ຢູ່ທີ່ຫ້ອງການ ອົງການຊາຍຟັນ ປະຈຳ ສປປ ລາວ ທີ່ບ້ານ ພັນໄຊ, ເມືອງ ຊຳເໜືອ ແຂວງ ຫົວພັນ;
6. ຊອງປະມູນຕ້ອງປິດກາວແລ້ວ ແລະ ລະບຸວ່າເອກະສານປະມູນ ຫ້າມເປີດກ່ອນ ວັນທີ **13/09/2023** ກ່ອນເວລາ **15:00** ແລະ ຊອງປະມູນ ຕ້ອງສົ່ງໃຫ້ຮອດຫ້ອງການ ອົງການຊາຍຟັນ ປະຈຳ ສປປ ລາວ ທີ່ບ້ານ ພັນໄຊ, ເມືອງ ຊຳເໜືອ, ແຂວງ ຫົວພັນ ກ່ອນ ເວລາ **14:00** ຂອງວັນທີ **13/09/2023** ຕາມທີ່ແຈ້ງໃນເອກະສານປະມູນ. ໂດຍໃຫ້ລົງທະບຽນທີ່ມີໃບຮັບຮອງວ່າໄດ້ຮັບ ຫຼື ໄດ້ສົ່ງ ເຊິ່ງຕ້ອງໄດ້ເຊັນຢັ້ງຢືນຈາກຜູ້ສົ່ງ ແລະ ຜູ້ຮັບ; (ກໍລະນີ ຕ້ອງການສົ່ງເອກະສານປະມູນກ່ອນວັນທີ **13/09/2023** ແມ່ນໃຫ້ມາສົ່ງຢູ່ຫ້ອງການຊາຍຟັນ ປະຈຳ ສປປ ລາວ ທີ່ບ້ານ ພັນໄຊ, ເມືອງ ຊຳເໜືອ, ແຂວງຫົວພັນ ແລະ ຕ້ອງມີການລົງທະບຽນວ່າໄດ້ຮັບ ຫຼື ໄດ້ສົ່ງ).

ຕູ້ ປ.ນ 761, ເຮືອນເລກທີ 598, ໜ່ວຍ 26, ບ. ສະພານທອງເໜືອ, ມ. ສີສັດຕະນາກ, ນະຄອນຫຼວງວຽງຈັນ
P.O. Box: 761, House No. 598, Unit 26, Saphanthong Neua Village, Sisattanak District, Vientiane
Tel: +856 (0) 21 412 966 | Fax: +856 (0) 21 263 217 | E-mail: info@childfund.org.la

ພວກເຮົາຮ່ວມກັນສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ ແລະ ການປ່ຽນແປງວິຖີທາງເພື່ອເຮັດໃຫ້ເດັກດ້ອຍໂອກາດ ແລະ ໄວໜຸ່ມທີ່ຢູ່ໃນສະພາບແວດລ້ອມທີ່ມີຄວາມຫຼາກຫຼາຍ ສາມາດສະແດງອອກ ແລະ ຮັບຮູ້ເຖິງສິດທິຂອງເຂົາເຈົ້າ.
We partner to create community and systems change which enables vulnerable children and young people, in all their diversity, to assert and realise their rights.